**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---== ** ==---

ສຳນັກງານນາຍົກລັດຖະມົນຕີ

ເລກທີ 132/ນຍ.

ວຽງຈັນ, ວັນທີ 15.08.2003

# ດຳລັດ

## ວ່າດ້ວຍການສ້າງຕັ້ງສາຂາມະຫາວິທະຍາໄລແຫ່ງຊາດ ຫລວງພະບາງ

*************

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງກະຊວງສຶກສາທິການ ສະບັບເລກທີ 167/ນຍ ລົງວັນທີ 09/09/1999.
- ອີງຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງສຶກສາທິການ ສະບັບເລກທີ 851/ສສ/2003 ລົງວັນທີ 6/8/2003.

## ນາຍົກລັດຖະມົນຕີ ອອກດຳລັດ :

ມາດຕາ 1 : ສ້າງຕັ້ງສາຂາມະຫາວິທະຍາໄລແຫ່ງຊາດ ຫລວງພະບາງ ໂດຍມີທີ່ຕັ້ງຢູ່ຕົວເມືອງຫລວງພະບາງ ແລະ ໃຫ້ຊື່ວ່າ "ສາຂາມະຫາວິທະຍາໄລແຫ່ງຊາດ ຫລວງພະບາງ".

ມາດຕາ 2 : ສາຂາມະຫາວິທະຍາໄລແຫ່ງຊາດ ຫລວງພະບາງ ແມ່ນຢູ່ພາຍໃຕ້ການຊີ້ນຳໂດຍກົງທາງດ້ານວິຊາການ ຈາກມະຫາວິທະຍາໄລແຫ່ງຊາດ, ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງສຶກສາທິການ, ແຂວງຫລວງພະບາງຮັບພາລະດ້ານສະຖານທີ່, ອຸປະກອນການສອນ-ການຮຽນ, ຄູສອນຂັ້ນພື້ນຖານ, ງົບປະມານ ແລະ ເງື່ອນໄຂສະດວກອື່ນໆ.

ມາດຕາ 3 : ສຳນັກງານນາຍົກລັດຖະມົນຕີ, ຄະນະຈັດຕັ້ງສູນກາງ, ບັນດາກະຊວງຕ່າງໆ, ມະຫາວິທະຍາໄລແຫ່ງຊາດ, ແຂວງ, ກຳແພງນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 4 : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ